ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====----

ສໍານັກງານ ຄຄຊ

ພະແນກຈັດຕັ້ງ ແລະ ບໍລິຫານ

ນະຄອນຫຼວງວຽງຈັນ, ວັນທີ 30 ກັນຍາ 2015

# ແຈ້ງການ

**ເຖິງ:** ບັນດາຄະນະພະແນກ ພາຍໃນ ສໍານັກງານ ຄຄຊ ທີ່ນັບຖື.

**ເລື່ອງ:** ຄັດເລືອກພະນັກງານ ເພື່ອສະໝັກເອົາທຶນການສຶກສາ ລະດັບປະລິນຍາໂທ ແລະ ປະລິນຍາເອກ ຢູ່ປະເທດຍີ່ປຸ່ນ ປະຈໍາສົກປີ 2016.

- ອີງຕາມແຈ້ງການຂອງກົມຈັດຕັ້ງແລະພະນັກງານ ເລກທີ 202/ກຈພ, ລົງວັນທີ 29 ກັນຍາ 2015;
- ອີງຕາມທິດຊີ້ນໍາຂອງທ່ານຮັກສາການຫົວໜ້າສໍານັກງານ ຄຄຊ ລົງວັນທີ 30 ກັນຍາ 2015.

ພະແນກຈັດຕັ້ງ ແລະ ບໍລິຫານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກພະນັກງານຜູ້ມີເງື່ອນໄຂໃນພະແນກຂອງຕົນ ເພື່ອສະໝັກເອົາທຶນການສຶກສາ ໃນລະດັບປະລິນຍາໂທ ແລະ ປະລິນຍາເອກ ຢູ່ປະເທດຍີ່ປຸ່ນ ປະຈໍາປີ 2016 ເຊິ່ງມາດຖານເງື່ອນໄຂເບື້ອງຕົ້ນຂອງຜູ້ສະໝັກມີຄື:

1. ມີອາຍຸການເຮັດວຽກຢ່າງໜ້ອຍ 3 ປີ ຂຶ້ນໄປ;
2. ຈົບປະລິນຍາຕີ ຫຼື ທຽບເທົ່າ (ມີອາຍຸການສຶກສາຢ່າງໜ້ອຍ 16 ປີ);
3. ບໍ່ແມ່ນເປົ້າໝາຍພະນັກງານທີ່ໄດ້ສະໝັກເອົາທຶນການສຶກສາອື່ນໆແລ້ວ ໃນປີ 2016;
4. ມີຄະແນນພາສາອັງກິດ TOEFL 550 ຫຼື IELTS 6.0 (ສໍາລັບທຶນ WB, ADB ແລະ JISPA);
5. ຜູ້ສະໝັກຈະຕ້ອງໄດ້ສອບເສັງເລກ ແລະ ພາສາອັງກິດ (ສໍາລັບທຶນ WB, ADB ແລະ JISPA).

ພະແນກໃດທີ່ມີພະນັກງານຄົບຖ້ວນຕາມເງື່ອນໄຂ ກະລຸນາສົ່ງລາຍຊື່ຢ່າງເປັນລາຍລັກອັກສອນມາຍັງພະແນກຈັດຕັ້ງ ແລະ ບໍລິຫານ <u>ພາຍໃນວັນທີ 02 ຕຸລາ 2015</u> ຖ້າກາຍກໍານົດເວລາດັ່ງກ່າວຖືວ່າສະຫຼະສິດ.

**(ທ່ານສາມາດເບິ່ງຂໍ້ມູນລະອຽດກ່ຽວກັບທຶນດັ່ງກ່າວໄດ້ ຢູ່ກະດານຂ່າວຂອງ ສໍານັກງານ ຄຄຊ ໃນໝວດແຈ້ງການ)**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ຮ.ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ

ລໍາພອນ ສົມພາໂລວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 202 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 29 SEP 2015

ສຳນັກງານ ຄຄຊ
ຮັບ ເລກທີ 1012
ວັນທີ 30 SEP 2015
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫັກຊັບ ທີ່ນັບຖື.

**ເລື່ອງ:** ສະເໜີພິຈາລະນາຄັດເລືອກພະນັກງານ ເພື່ອສະໝັກເອົາທຶນການສຶກສາ ລະດັບປະລິນຍາ ໂທ ຢູ່ ປະເທດ ຍີ່ປຸ່ນ ປະຈຳປີ 2016.

- ອີງຕາມໜັງສືແຈ້ງຂອງມະຫາວິທະຍາໄລໂຕກຽວ ສະບັບລົງວັນທີ 18/6/2015;
- ອີງຕາມໜັງສືແຈ້ງການຂອງກົມພົວພັນສາກົນ ສະບັບເລກທີ 320/ກພສ ລົງວັນທີ 15/7/2015;
- ອີງຕາມແຈ້ງການຂອງສະຖາບັນການຄົ້ນຄວ້ານະໂຍບາຍແຫ່ງຊາດ (National Graduate Institute for Policy Studies: GRIPS) ສະບັບລົງວັນທີ 27/8/2015.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: G-Cube, IMF, WB ແລະ ADB ໄດ້ແຈ້ງມາຍັງ ທຫລ ສະໝັກເອົາທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ລະບົບພາສາອັງກິດ ຢູ່ປະເທດ ຍີ່ປຸ່ນ ປະຈຳປີ 2016 ດັ່ງມີລາຍລະອຽດລຸ່ມນີ້:

**I. ທຶນ Grips Global Governance Program (G-cube)**:

- ຢູ່ **National Graduate Institute for Policy Studies (GRIPS)** ໃນລະດັບ ປະລິນຍາໂທ ສາຂາ Master of Arts in Advanced Policy Studies ແລະ ໃນລະດັບ ປະລິນຍາເອກ ສາຂາ Ph.D. in Advanced Policy Studies. ລາຍລະອຽດສາມາດເຂົ້າເບິ່ງໄດ້ທີ່ Website: http://www.grips.ac.jp/g-cube/en/

**II. ທຶນ Japan-IMF Scholarship for Asia (JISPA):**

1. ຢູ່ **National Graduate Institute for Policy Studies (GRIPS)** ໃນສາຂາວິຊາ: Macroeconomic Policy Program (Master of Public Policy) ໄລຍະເວລາຮຽນ 1 ປີ ແລະ Macroeconomic Policy Program (Master of Arts in Public Economics) ໄລຍະເວລາຮຽນ 2 ປີ;
2. ຢູ່ **Hitotsubashi University (HIT)** ໃນສາຂາວິຊາ: Asian Public Policy Program [Master of Public Policy (Public Economics)] ໄລຍະເວລາຮຽນ 2 ປີ;

3. ຢູ່ **International University of Japan (IUJ)** ໃນສາຂາວິຊາ: Macroeconomic Policy Program (Master of Arts in Economics) ໄລຍະເວລາຮຽນ 2 ປີ;

4. ຢູ່ **The University of Tokyo (UTokyo)** ໃນສາຂາວິຊາ: International Program (Master of Public Policy) ໄລຍະເວລາຮຽນ 2 ປີ; ລາຍລະອຽດສາມາດເຂົ້າເບິ່ງໄດ້ທີ່ Website: http://www.imf.org/external/oap/partguide.htm

**III. ທຶນ Join Japan/World Bank Graduate Scholarship Program (JJ/WBGSP) ແລະ ທຶນ ADB-Japan Scholarship Program (ADB-JSP):**

- ຢູ່ **The University of Tokyo (UTokyo)** ໃນສາຂາວິຊາ: International Program (Master of Public Policy) ໄລຍະເວລາຮຽນ 2 ປີ. ລາຍລະອຽດສາມາດເຂົ້າເບິ່ງໄດ້ທີ່ Website: http://www.pp.u-tokyo.ac.jp/en/mppip/

**IV. ມາດຖານເງື່ອນຂອງຜູ້ສະໝັກ:**

1. ມີປີການເຮັດວຽກຢ່າງໜ້ອຍ 3 ປີ ຂຶ້ນໄປ;
2. ຈົບປະລິນຍາຕີ ຫຼື ທຽບເທົ່າ (ມີອາຍຸການສຶກສາຢ່າງໜ້ອຍ 16 ປີ);
3. ບໍ່ແມ່ນເປົ້າໝາຍພະນັກງານທີ່ໄດ້ສະໝັກເອົາທຶນການສຶກສາອື່ນໆແລ້ວ ໃນປີ 2016;
4. ມີຄະແນນພາສາອັງກິດ TOEFL 550 ຫຼື IELTS 6.0 (ສຳລັບທຶນ WB, ADB ແລະ JISPA);
5. ຜູ້ສະໝັກຈະຕ້ອງໄດ້ສອບເສັງເລກ ແລະ ພາສາອັງກິດ (ສຳລັບທຶນ WB, ADB ແລະ JISPA).

ສະນັ້ນ, ກົມຈັດຕັ້ງແລະພະນັກງານ ຈິ່ງແຈ້ງມາຍັງທ່ານ ເພື່ອຄັດເລືອກພະນັກງານ ຈຳນວນ 1 ທ່ານ ທີ່ມີມາດຖານເງື່ອນໄຂຄົບຖ້ວນຕາມການກຳນົດ ພ້ອມທັງປະກອບຂໍ້ມູນຂອງຜູ້ສະໝັກຢ່າງຄົບຖ້ວນຕາມຕາຕາລາງຄັດຕິດມາພ້ອມນີ້ ແລ້ວນຳສົ່ງມາຍັງກົມຈັດຕັ້ງແລະພະນັກງານ **ບໍ່ໃຫ້ກາຍວັນທີ <u>06/10/2015</u>**, ຖ້າກາຍກຳນົດເວລາດັ່ງກ່າວຖືວ່າສະຫຼະສິດ. ກົມຈັດຕັ້ງແລະພະນັກງານ ຈະແຈ້ງຕອບສຳລັບເປົ້າໝາຍທີ່ຖືກຄັດເລືອກໃຫ້ສະໝັກເອົາທຶນດັ່ງກ່າວ **ບໍ່ກາຍວັນທີ <u>13/10/2015</u>**; ຖ້າບໍ່ໄດ້ຮັບການແຈ້ງຕອບພາຍໃນກຳນົດເວລາດັ່ງກ່າວ ຖືວ່າບໍ່ໄດ້ຖືກຄັດເລືອກ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ບຸນຕາ ດາຣາວົ

✪ ເອກະສານຄັດຕິດ:

- ຕາຕາລາງສະໜອງຂໍ້ມູນ 1 ສະບັບ.

## ຕາຕະລາງສະໜອງຂໍ້ມູນພະນັກງານທີ່ຈະສະໝັກທຶນການສຶກສາ ຢູ່ປະເທດ ຍີ່ປຸ່ນ

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ວ, ດ, ປ ເຂົ້າເປັນພະນັກງານ ລັດຖະກອນ | ຕຳແໜ່ງ | ໜ້າທີ່ຮັບຜິດຊອບ (ອະທິບາຍໜ້າວຽກໂດຍສັງເຂບ) | ສັງກັດ ພະແນກ | ລະດັບວິຊາສະເພາະ ໃນປັດຈຸບັນ/ສາຂາ | ຄວາມຫຍຸ້ງຍາກໃນການປະຕິບັດວຽກງານ (ທັກສະທີ່ຂາດ ຫຼື ຈຳເປັນໃນການດຳເນີນວຽກງານ) | ຄວາມເຫັນຂອງກົມກອງຕໍ່ກັບຜູ້ກ່ຽວ ແລະ ເຫດຜົນທີ່ຜູ້ກ່ຽວຖືກເລືອກ ເມື່ອທຽບກັບ ພ/ງ ຜູ້ອື່ນໆ | ການໄປຮຽນຈະຊ່ວຍໃນການປະຕິບັດວຽກງານດີຂຶ້ນໃນດ້ານໃດ | | ພາຍຫຼັງຮຽນຈົບມາຈະມີການປັບປຸງວຽກງານແນວໃດ | ສະເໜີຮຽນໃນລະດັບ, ສາຂາ ແລະ ໂຮງຮຽນ | ດ້ອຍທຶນ ລະບົບ ຈັກປີ | ຫົວຂໍ້ແຜນການຂຽນບົດຈົບຊັ້ນ | ການປະເມີນຜົນງານປະຈຳປີ 3 ປີ ຍ້ອນຫຼັງ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | ຕໍ່ຕົນເອງ | ຕໍ່ການຈັດຕັ້ງ | | | | | |
| 1 | | | | | | | | | | | | | | | | |
| 2 | | | | | | | | | | | | | | | | |
| 3 | | | | | | | | | | | | | | | | |
| 4 | | | | | | | | | | | | | | | | |
| 5 | | | | | | | | | | | | | | | | |

ນະຄອນຫຼວງວຽງຈັນ, ວັນທີ
ເຊັນ ແລະ ປະທັບຕາຈາກກົມກອງ